Update on 24 February 2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0352

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ.............. /ພບ

ນະຄອນຫຼວງວຽງຈັນ, ວັນທີ.............. 13 03 12

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

- ອີງຕາມກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 04/ສພຊ, ລົງວັນທີ 08/12/2008;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 3 ເມສາ 1999;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດຳລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009.

### ລັດຖະມົນຕີວ່າການ ກະຊວງ ພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການເພື່ອຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ລວມທັງການນຳເຂົ້າມາປຸງແຕ່ງໂດຍບໍ່ໄດ້ຈຳກັດປະລິມານ, ແນໃສ່ຄຸ້ມຄອງການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດຕໍ່ເສດຖະກິດຂອງຊາດ.

**ມາດຕາ 2. ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. "ແຮ່ທາດ" ໝາຍເຖິງທາດທີ່ບໍ່ມີຊີວິດ ຊຶ່ງເກີດຂຶ້ນໂດຍທຳມະຊາດ, ບໍ່ສາມາດສ້າງຂຶ້ນໃໝ່ໄດ້, ມີຄຸນລັກສະນະທາງດ້ານເຄມີ ແລະ ວັດຖຸວິທະຍາ ຢູ່ໃນພາວະແຂງ, ພາວະແຫຼວ ແລະ ພາວະອາຍ.

2. "ຜະລິດຕະພັນແຮ່ທາດ" ໝາຍເຖິງແຮ່ທາດທີ່ໄດ້ຜ່ານການປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ.